**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

--------ຜຜຜຜຜ ☆ ສສສສສ--------

ສຳນັກງານນາຍົກລັດຖະມົນຕີ

ເລກທີ່...137......../ສນຍ

*ນະຄອນຫຼວງວຽງຈັນ, ວັນທີ ໒໔ ກໍລະກົດ 2006*

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສະຖາບັນວິທະຍາສາດສັງຄົມແຫ່ງຊາດ

- ອີງຕາມ ມະຕິຕົກລົງ ຂອງ ກົມການເມືອງສູນກາງພັກ ສະບັບເລກທີ 95/ກມສພ, ລົງວັນທີ 11 ກໍລະກົດ 2006;
- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສ.ປ.ປ. ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003 ໝວດທີ IV ມາດຕາ 12 ວ່າດ້ວຍສິດ ແລະ ໜ້າທີ່ ຂອງ ນາຍົກລັດຖະມົນຕີ ແລະ ໝວດທີ V ມາດຕາ 17 ວ່າດ້ວຍໂຄງປະກອບກົງຈັກ ຂອງ ສຳນັກງານນາຍົກລັດຖະມົນຕີ;
- ອີງຕາມ ໃບສະເໜີ ຂອງ ທ່ານຫົວໜ້າສະຖາບັນວິທະຍາສາດສັງຄົມແຫ່ງຊາດ ສະບັບເລກທີ.............. ລົງວັນທີ.........................

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ**

**ອອກດຳລັດ:**

## ໝວດທີ I

## ຈຸດປະສົງ, ທີ່ຕັ້ງ ແລະ ພາລະບົດບາດ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ກຳນົດ ທີ່ຕັ້ງ, ພາລະບົດບາດ, ໜ້າທີ່ ແລະ ໂຄງປະກອບການຈັດຕັ້ງ ຂອງ ສະຖາບັນວິທະຍາສາດສັງຄົມແຫ່ງຊາດ ເພື່ອເປັນບ່ອນອີງໃນການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະຖາບັນຯ ແລະ ແນໃສ່ຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ ແລະ ລັດຖະບານ ກ່ຽວກັບການສົ່ງເສີມການພັດທະນາວຽກງານວິທະຍາສາດສັງຄົມ ຂອງ ປະເທດ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ສະຖາບັນວິທະຍາສາດສັງຄົມແຫ່ງຊາດ ຂຽນຫຍໍ້ດ້ວຍຕົວອັກສອນພາສາລາວວ່າ: "ສວສຊ" ແມ່ນອົງການຈັດຕັ້ງວິຊາການ ທີ່ຂຶ້ນກັບລັດຖະບານ. ດ້ານ ພັກ ສ.ວ.ສ.ຊ ມີຖານະເທົ່າກັບຄະນະຕ່າງໆ ຂອງ ສູນກາງພັກ.

ສ.ວ.ສ.ຊ ມີພາລະບົດບາດຈັດຕັ້ງ ແລະ ດຳເນີນການຄົ້ນຄວ້າວິທະຍາສາດການເມືອງ-ສັງຄົມ ຂອງ ສ.ປ.ປ. ລາວ; ຕອບສະໜອງຂໍ້ມູນຂ່າວສານ ແລະ ໃຫ້ຄຳປຶກສາດ້ານວິທະຍາສາດສັງຄົມ ເພື່ອຮັບໃຊ້ການວາງແນວທາງນະໂຍບາຍ, ການວາງແຜນຍຸດທະສາດ, ແຜນແມ່ບົດ ແລະ ແຜນການພັດທະນາປະເທດ ໃນແຕ່ລະໄລຍະ; ສົມທົບການຄົ້ນຄວ້າວິທະຍາສາດ ກັບການຈັດຕັ້ງບຳລຸງຍົກລະດັບໃຫ້ນັກຄົ້ນຄວ້າວິທະຍາສາດສັງຄົມ ຂອງ ສ.ວ.ສ.ຊ ແລະ ຂະແໜງການຕ່າງໆ; ຈັດຕັ້ງເຜີຍແຜ່ຜົນສຳເລັດ ຂອງ ການຄົ້ນຄວ້າດ້ວຍຮູບການຕ່າງໆ ທີ່ເໝາະສົມ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

1. ສ້າງ ແລະ ນຳສະເໜີລັດຖະບານພິຈາລະນາແຜນຍຸດທະສາດ, ແຜນແມ່ບົດ, ແຜນການ 05 ປີ, ແຜນການປະຈຳປີ ຂອງ ສວສຊ. ຈັດຕັ້ງປະຕິບັດ ພາຍຫຼັງທີ່ຖືກຮັບຮອງຈາກລັດຖະບານແລ້ວ;
2. ສ້າງແຜນງານ ແລະ ໂຄງການເພື່ອດຳເນີນການຄົ້ນຄວ້າ ກ່ຽວກັບບັນຫາຕ່າງໆ ໃນຂົງເຂດວິທະຍາສາດສັງຄົມ ຂອງ ສ.ປ.ປ. ລາວ ເຊັ່ນ: ປັດຊະຍາ, ເສດຖະສາດ, ການເມືອງ, ປະຫວັດສາດ, ພາສາສາດ, ວັດທະນະທຳ, ຊົນເຜົ່າ, ສາສະໜາ, ສິດທິມະນຸດ ແລະ ອື່ນໆ; ຄົ້ນຄວ້າ ຫຼື ຖອດຖອນບົດຮຽນກ່ຽວກັບວຽກງານຄົ້ນຄວ້າວິທະຍາສາດສັງຄົມ ຂອງ ປະເທດຕ່າງໆໃນໂລກ ຕາມຄວາມຈຳເປັນ; ສະຫຼຸບພຶດຕິກຳ ແລະ ພັດທະນາທິດສະດີ ກ່ຽວກັບການປົກປັກຮັກສາ ແລະ ສ້າງສາປະເທດຊາດ ຕາມທິດສັງຄົມນິຍົມຂອງລາວເຮົາ;
3. ສະໜອງຂໍ້ມູນຂ່າວສານ ແລະ ໝາກ-ຜົນຂອງການຄົ້ນຄວ້າວິທະຍາສາດສັງຄົມ ເພື່ອຮັບໃຊ້ການກຳນົດແນວທາງນະໂຍບາຍ, ແຜນຍຸດທະສາດ, ແຜນແມ່ບົດຂອງປະເທດໃນແຕ່ລະໄລຍະ;
4. ເຂົ້າຮ່ວມປະກອບສ່ວນກັບພາກສ່ວນຕ່າງໆ ເພື່ອຄົ້ນຄວ້າ-ຮ່າງແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ, ກົນໄກການຄຸ້ມຄອງ, ການພັດທະນາຂົງເຂດວຽກງານວິທະຍາສາດ ສັງຄົມຂອງປະເທດ; ຄົ້ນຄວ້າ ແລະ ນຳສະເໜີລັດຖະບານ ປະກາດໃຊ້ກ່ຽວກັບ

ກົນໄກ ແລະ ນະໂຍບາຍໃນດ້ານຕ່າງໆ ຕໍ່ນັກວິທະຍາສາດສັງຄົມ ຕາມການມອບໝາຍສິດ;

5. ຄົ້ນຄວ້າ ແລະ ໃຫ້ຄຳຕອບ ກ່ຽວກັບບັນຫາຕ່າງໆ ໃນຂົງເຂດວິທະຍາສາດສັງຄົມ ເພື່ອຮັບໃຊ້ການປົກປັກຮັກສາ ແລະ ສ້າງສາປະເທດ ແລະ ການພັດທະນາເສດຖະກິດ-ສັງຄົມ;
6. ປະສານສົມທົບກັບອົງການ ແລະ ສະຖາບັນການສຶກສາຕ່າງໆ ເພື່ອຈັດຕັ້ງເຜີຍແຜ່ຄວາມຮູ້ ແລະ ໝາກຜົນ ຂອງການຄົ້ນຄວ້າວິທະຍາສາດສັງຄົມ, ເຮັດໃຫ້ພົນລະເມືອງລາວມີຄວາມຮູ້ດ້ານວິທະຍາສາດສັງຄົມ ນັບມື້ນັບສູງຂຶ້ນ;
7. ປະສານສົມທົບ, ທັງຄົ້ນຄວ້າວິທະຍາສາດ ທັງຈັດຕັ້ງບຳລຸງຍົກລະດັບຄວາມຮູ້ຄວາມສາມາດ ໃນດ້ານວິທະຍາສາດສັງຄົມ ໃຫ້ແກ່ນັກຄົ້ນຄວ້າວິທະຍາສາດສັງຄົມທີ່ສັງກັດຢູ່ ສ.ວ.ສ.ຊ ແລະ ສັງກັດຢູ່ໃນການຈັດຕັ້ງ ຫຼື ສະຖາບັນຄົ້ນຄວ້າ ຂອງ ຂະແໜງການຕ່າງໆ;
8. ເປັນເຈົ້າການ ຫຼື ສົມທົບກັບອົງການທີ່ກ່ຽວຂ້ອງ ເພື່ອກວດຜ່ານ, ຮັບຮອງ ຫຼື ຢັ້ງຢືນໃນແງ່ວິທະຍາສາດສັງຄົມຕໍ່ແຜນງານ, ໂຄງການພັດທະນາເສດຖະກິດສັງຄົມ ຕາມການຊີ້ນຳຂອງລັດຖະບານ ຫຼື ຕາມການສະເໜີ ຂອງ ກະຊວງ, ອົງການທຽບເທົ່າກະຊວງ, ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ຫົວໜ່ວຍທຸລະກິດຕ່າງໆ;
9. ພົວພັນ ແລະ ຮ່ວມມືກັບອົງການຈັດຕັ້ງສາກົນ ແລະ ຕ່າງປະເທດ ເພື່ອດຳເນີນການຄົ້ນຄວ້າວິທະຍາສາດສັງຄົມ ແລະ ເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານທຶນຮອນ ແລະ ເຕັກນິກວິຊາການ ເຂົ້າໃນການພັດທະນາຂະແໜງວິທະຍາສາດສັງຄົມ ຂອງລາວເຮົາ;
10. ຄຸ້ມຄອງກິງຈັກການຈັດຕັ້ງ, ຖັນແຖວພະນັກງານ-ລັດຖະກອນ ແລະ ນັກວິທະຍາສາດ ຂອງ ສ.ວ.ສ.ຊ ຕາມລະບຽບການ ແລະ ຕາມການແບ່ງຂັ້ນຄຸ້ມຄອງ; ຄຸ້ມຄອງ ແລະ ນຳໃຊ້ຢ່າງມີປະສິດທິຜົນ ຊັບສົມບັດຂອງລັດ ແລະ ການເງິນງົບປະມານ ຂອງ ສ.ວ.ສ.ຊ;
11. ຈັດຕັ້ງເຜີຍແຜ່ຜົນ ຂອງ ການຄົ້ນຄວ້າວິທະຍາສາດໃນດ້ານຕ່າງໆ ໃຫ້ແກ່ສັງຄົມ ດ້ວຍຮູບການທີ່ເໝາະສົມ;
12. ປະຕິບັດໜ້າທີ່ອື່ນໆ ທີ່ລັດຖະບານ, ນາຍົກລັດຖະມົນຕີ ມອບໝາຍໃຫ້;

**ມາດຕາ 4. ຂອບເຂດສິດ**

1. ຮຽກຮ້ອງໄປຍັງບັນດາກະຊວງ, ອົງການທຽບເທົ່າກະຊວງຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ແລະ ຫົວໜ່ວຍທຸລະກິດ ສະໜອງຂໍ້ມູນຂ່າວສານທີ່ຈຳເປັນ ເພື່ອຮັບໃຊ້ການຄົ້ນຄວ້າວິທະຍາສາດສັງຄົມ;

2. ໃຫ້ຄໍາປຶກສາ, ຄໍາສະເໜີແນະ ຕໍ່ ລັດຖະບານ, ນາຍົກລັດຖະມົນຕີ, ຫົວໜ້າອົງການຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ແລະ ຫົວໜ່ວຍທຸລະກິດ ໃນດ້ານວິທະຍາສາດສັງຄົມ; ເຮັດການບໍລິການກ່ຽວກັບວຽກງານຄົ້ນຄວ້າວິທະຍາສາດສັງຄົມ; ເຊັນສັນຍາກັບອົງການຈັດຕັ້ງລັດ, ອົງການຈັດຕັ້ງທາງສັງຄົມ ຫຼື ຫົວໜ່ວຍທຸລະກິດ ເພື່ອຄົ້ນຄວ້າວິທະຍາສາດສັງຄົມ ພາຍໃຕ້ຫົວຂໍ້ບັນຫາໃດໜຶ່ງທີ່ລະອຽດ;
3. ເຂົ້າຮ່ວມກອງປະຊຸມຕ່າງໆ ທັງອົງການຈັດຕັ້ງພາຍໃນ ແລະ/ຫຼື ຕ່າງປະເທດຈັດຂຶ້ນ ກ່ຽວກັບວຽກງານຄົ້ນຄວ້າວິທະຍາສາດສັງຄົມ ຕາມການເຊີນ ແລະ ຕາມການອະນຸມັດ;
4. ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບບັນຫາຕ່າງໆ ທີ່ນອນຢູ່ໃນຄວາມຮັບຜິດຊອບ ຂອງ ສ.ວ.ສ.ຊ;
5. ແຕ່ງຕັ້ງ, ຍົກຍ້າຍ, ປະຕິບັດນະໂຍບາຍ, ປະຕິບັດວິໄນ ແລະ ອື່ນໆ ຕໍ່ພະນັກງານ-ລັດຖະກອນ ແລະ ນັກຄົ້ນຄວ້າວິທະຍາສາດສັງຄົມ ທີ່ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຂອງຕົນ ຕາມລະບຽບການກໍານົດ;
6. ເຊັນສັນຍາ, ອະນຸສັນຍາ, ບົດບັນທຶກຊ່ວຍຈໍາ ກັບ ອົງການຈັດຕັ້ງສາກົນ ແລະ ສະຖາບັນຄົ້ນຄວ້າວິທະຍາສາດ ຂອງ ຕ່າງປະເທດ ຕາມການມອບໝາຍສິດ ຂອງ ລັດຖະບານ ຫຼື ນາຍົກລັດຖະມົນຕີ;
7. ປະຕິບັດສິດອື່ນໆ ທີ່ລັດຖະບານ, ນາຍົກລັດຖະມົນຕີ ມອບໝາຍໃຫ້.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

### ມາດຕາ 5. ໂຄງປະກອບກົງຈັກ

- ກົງຈັກການຈັດຕັ້ງ ທີ່ມີຖານະເທົ່າກັບກົມ ຂອງ ກະຊວງ, ອົງການທຽບເທົ່າກະຊວງ ປະກອບມີ:

1. ຫ້ອງການ; (ບໍລິຫານ, ຈັດຕັ້ງ, ການເງິນ ແລະ ຮ່ວມມືສາກົນ)
2. ສະຖາບັນຄົ້ນຄວ້າ ການເມືອງວິທະຍາ;
3. ສະຖາບັນຄົ້ນຄວ້າ ປະຫວັດສາດ;
4. ສະຖາບັນຄົ້ນຄວ້າ ຊົນເຜົ່າ ແລະ ສາສະໜາ;
5. ສະຖາບັນຄົ້ນຄວ້າ ພາສາສາດ;
6. ສະຖາບັນຄົ້ນຄວ້າ ວັດທະນະທໍາ.

- ◆ ກົງຈັກການຈັດຕັ້ງ, ຜູ້ທີ່ເປັນຫົວໜ້າ ມີຕຳແໜ່ງເທົ່າກັບ ຮອງຫົວໜ້າກົມ ຂອງກະຊວງ, ອົງການທຽບເທົ່າກະຊວງ ປະກອບມີ:

  1. ສູນ ຂໍ້ມູນຂ່າວສານ;
  2. ສູນ ຄົ້ນຄວ້າສິດທິມະນຸດ.

**ມາດຕາ 6.** ມອບໃຫ້ຫົວໜ້າ ສ.ວ.ສ.ຊ ກຳນົດລະອຽດ ພາລະບົດບາດ, ໜ້າທີ່, ໂຄງປະກອບການຈັດຕັ້ງ ແລະ ລະບຽບການພົວພັນປະສານວຽກງານ ຂອງ ຫ້ອງການ, ບັນດາສະຖາບັນຄົ້ນຄວ້າວິທະຍາສາດ ແລະ ສູນຕ່າງໆ ບົນພື້ນຖານການປະກອບຄຳເຫັນ ຂອງ ອົງການທີ່ກ່ຽວຂ້ອງ.

**ມາດຕາ 7. ໂຄງປະກອບບຸກຄະລາກອນ**

ສ.ວ.ສ.ຊ ປະກອບມີ: ຫົວໜ້າ, ບັນດາຮອງຫົວໜ້າ ສ.ວ.ສ.ຊ; ບັນດາຫົວໜ້າ, ຮອງຫົວໜ້າສະຖາບັນຄົ້ນຄວ້າວິທະຍາສາດ; ບັນດາຫົວໜ້າ, ຮອງຫົວໜ້າສູນ; ບັນດາຫົວໜ້າຂະແໜງວິຊາ; ພະນັກງານ-ລັດຖະກອນ ແລະ ນັກຄົ້ນຄວ້າວິທະຍາສາດ ສັງກັດຢູ່ໃນບັນດາສະຖາບັນຄົ້ນຄວ້າ ແລະ ສູນຕ່າງໆ ຂອງ ສ.ວ.ສ.ຊ.

- ຫົວໜ້າ ສ.ວ.ສ.ຊ ມີຕຳແໜ່ງບໍລິຫານປະເພດ 3, ໄດ້ຮັບການແຕ່ງຕັ້ງ ຫຼື ຮັບຮອງຕາມກົດໝາຍກຳນົດ. ຫົວໜ້າສະຖາບັນຯ ມີໜ້າທີ່ຈັດຕັ້ງປະຕິບັດແນວທາງນະໂຍບາຍວາງອອກ, ເປັນຜູ້ອຳນວຍ, ຄວບຄຸມທຸກວຽກງານ ຂອງ ສ.ວ.ສ.ຊ, ມີຄວາມຮັບຜິດຊອບຕໍ່ລັດຖະບານ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງໃນການຈັດຕັ້ງປະຕິບັດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງ ສ.ວ.ສ.ຊ ຕາມທີ່ໄດ້ກຳນົດຢູ່ໃນມາດຕາ 2, 3 ແລະ 4 ເທິງນີ້;
- ບັນດາຮອງຫົວໜ້າ ສ.ວ.ສ.ຊ ມີຕຳແໜ່ງບໍລິຫານປະເພດ 4, ເປັນຜູ້ຊ່ວຍຫົວໜ້າ ໃນການອຳນວຍ, ຄວບຄຸມວຽກງານຂອງສະຖາບັນຯ ແລະ ຖືກມອບໝາຍໃຫ້ຮັບຜິດຊອບຂົງເຂດ ຫຼື ກຸ່ມວຽກງານໃດໜຶ່ງ ຂອງ ສ.ວ.ສ.ຊ. ຮອງຫົວໜ້າສະຖາບັນມີຄວາມຮັບຜິດຊອບ ຕໍ່ ຫົວໜ້າສະຖາບັນຯ ກ່ຽວກັບຜົນສຳເລັດ ຫຼື ຂໍ້ບົກຜ່ອງ ໃນຂົງເຂດວຽກງານທີ່ແບ່ງງານໃຫ້ຮັບຜິດຊອບ.

ບັນດາຮອງຫົວໜ້າ ສ.ວ.ສ.ຊ, ຫົວໜ້າຫ້ອງການ ແລະ ບັນດາຫົວໜ້າສະຖາບັນຄົ້ນຄວ້າວິທະຍາສາດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຕາມກົດໝາຍກຳນົດ; ຮອງຫົວໜ້າ ຫ້ອງການ, ບັນດາຮອງຫົວໜ້າ ສະຖາບັນຄົ້ນຄວ້າວິທະຍາສາດ ແລະ ບັນດາຫົວໜ້າສູນລົງມາ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຫົວໜ້າ ສ.ວ.ສ.ຊ.

**ມາດຕາ 8. ລະບອບແບບແຜນວິທີເຮັດວຽກ**

ສ.ວ.ສ.ຊ ເຄື່ອນໄຫວວຽກງານຕາມຫຼັກການ ແລະ ແບບແຜນວິທີເຮັດວຽກດັ່ງນີ້:

1. ປະຕິບັດຫຼັກການເຮັດວຽກແບບລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ປະຕິບັດລະບອບຫົວໜ້າດຽວ; ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງ ພະນັກງານ-ລັດຖະກອນ ແລະ ນັກຄົ້ນຄວ້າວິທະຍາສາດ;
2. ເຮັດວຽກຕາມແຜນການ, ແຜນງານ ແລະ ໂຄງການທີ່ລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີຄາດໝາຍ ໃນແຕ່ລະໄລຍະ;
3. ປະຕິບັດລະບອບຕິດຕາມ, ກວດກາ, ສ່ອງແສງລາຍງານ ແລະ ສະຫຼຸບຖອດຖອນບົດຮຽນໃນແຕ່ລະດ້ານ ແລະ ແຕ່ລະໄລຍະ; ພົວພັນປະສານສົມທົບເປັນຢ່າງດີ ກັບ ອົງການຈັດຕັ້ງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ, ກັບອົງການຈັດຕັ້ງສາກົນ ແລະ ຕ່າງປະເທດ.

## ໝວດທີ IV

## ບົດບັນຍັດສຸດທ້າຍ

**ມາດຕາ 9. ກາປະທັບ ແລະ ງົບປະມານ**

ສ.ວ.ສ.ຊ ມີກາປະທັບ, ມີງົບປະມານຂັ້ນ 1 ເພື່ອຮັບໃຊ້ວຽກງານທາງລັດຖະການ ແລະ ມີລາຍໄດ້ຈາກການບໍລິການດ້ານການຄົ້ນຄວ້າວິທະຍາສາດສັງຄົມ.

**ມາດຕາ 10. ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ສ.ວ.ສ.ຊ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 11. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີແຫ່ງ ສ.ປ.ປ. ລາວ**